ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

**ກະຊວງກະສິກຳ ແລະ ປ່າໄມ້**
**ກອງທຶນຫລຸດຜ່ອນຄວາມທຸກຍາກ III (ທລຍ)**
ແຫລ່ງທຶນ: IDA (World Bank) Credit No. 5827-LA (Project ID. P157963)

# ໜັງສືແຈ້ງເຊີນເຂົ້າຮ່ວມການປະມູນສົມທຽບລາຄາ

**ໂຄງການຍ່ອຍ ຮອບວຽນທີ 16**

ສໍາລັບແຂວງ: ຫົວພັນ, ຊຽງຂວາງ, ຫລວງນໍ້າທາ, ສະຫວັນນະເຂດ, ສາລະວັນ, ເຊກອງ ແລະ ອັດຕະປື

1. ໃນປີ 2019 ລັດຖະບານ ໄດ້ລົງທຶນໃນຂອບຂອງ ກອງທຶນຫລຸດຜ່ອນຄວາມທຸກຍາກ ທັງໝົດປະມານ 14.796.457 ໂດລາສະຫະລັດ ຫລື ປະມານ 125 ຕື້ ກີບ (ໃນນັ້ນ, ເປັນທຶນສົມທົບຂອງລັດຖະບານ 11 ຕື້ ກີບ), ສະເພາະການກໍ່ສ້າງໂຄງການສິ່ງອໍານວຍຄວາມສະດວກ ແມ່ນປະມານ 92 ຕື້ ກີບ ເຊິ່ງປະກອບມີ 455 ໂຄງການຍ່ອຍ ໃນ 10 ແຂວງ (ຫົວພັນ, ຊຽງຂວາງ, ຫລວງນໍ້າທາ, ຜົ້ງສາລີ, ອຸດົມໄຊ, ຫລວງພະບາງ, ສະຫັວນນະເຂດ, ສາລະວັນ, ເຊກອງ, ແລະ ອັດຕະປື) ລວມມີຂະແໜງກະສິກໍາ ແລະ ປ່າໄມ້, ສາທາລະນະສຸກ, ສຶກສາ, ການສະໜອງນໍ້າ ແລະ ສຸຂະອະນາໄມ ແລະ ຄົມມະນາຄົມຂົນສົ່ງ. ປະຈຸບັນ ບັນດາບ້ານທີ່ໄດ້ຮັບທຶນດັ່ງກ່າວ ມີຈຸດປະສົງຈະນໍາໃຊ້ທຶນນີ້ ເພື່ອຈັດຕັ້ງປະຕິບັດໂຄງການຍ່ອຍ ຮອບວຽນທີ 16 ຂອງ ທລຍ ໃນການດໍາເນີນການກໍ່ສ້າງໂຄງການຄືດັ່ງກ່າວ ດ້ວຍການສົມທຽບລາຄາ **<u>ພາຍໃນທ້ອງຖິ່ນ</u>**. ລາຍລະອຽດລາຍການໂຄງການ ແລະ ທີ່ຕັ້ງໂຄງການ ແມ່ນຄັດຕິດມາພ້ອມນີ້;
2. **<u>ບັນດາບໍລິສັດທ້ອງຖິ່ນ</u>**ທີ່ມີຄວາມສົນໃຈ ໃຫ້ເຂົ້າພົວພັນລາຍລະອຽດ, ຮັບເອົາຊອງປະມູນ ແລະ ລົງທະບຽນການຮັບຊອງໄດ້ ນໍາທີມງານຈັດຊື້ບ້ານທີ່ກ່ຽວຂ້ອງ ໂດຍບໍ່ໄດ້ເສຍຄ່າຊອງ (ແຈກໃຫ້ລ້າ);
3. ຊອງສະເໜີລາຄາຂອງທ່ານ ຕ້ອງສົ່ງໃຫ້ທີມງານຈັດຊື້ບ້ານທີ່ກ່ຽວຂ້ອງ ພາຍໃນເວລາ ຫລື ກ່ອນເວລາ ແລະ ວັນທີ ທີ່ກໍານົດໄວ້ໃນເອກະສານແຈ້ງເຊີນຂອງແຕ່ລະບ້ານ. ຊອງປະມູນລາຄາໃດທີ່ສົ່ງຊ້າກາຍເວລາທີ່ກໍານົດໄວ້ ແມ່ນຈະຖືກປະຕິເສດ ແລະ ສົ່ງຄືນ ໂດຍຈະບໍ່ໄດ້ມີການເປີດຊອງ. ຊອງເອກະສານລາຄາທຸກໆຊອງແມ່ນຈະໄດ້ເປີດພ້ອມກັນໃນເວລາ ແລະ ວັນທີ ທີ່ກໍານົດໄວ້ໃນເອກະສານແຈ້ງເຊີນຂອງແຕ່ລະບ້ານ, ສະຖານທີ່ເປີດຊອງລາຄາ ແມ່ນຢູ່ທີ່ບ້ານທີ່ໄດ້ຮັບທຶນ ໂດຍຊ້ອງໜ້າທີມງານບ້ານ, ຊາວບ້ານ ແລະ ຕາງໜ້າຈາກຜູ້ເຂົ້າຮ່ວມຍື່ນຊອງລາຄາ ຜູ້ທີ່ສົນໃຈເຂົ້າຮ່ວມການເປີດຊອງລາຄານໍາ;

   ໄລຍະເວລາການເປີດຊອງປະມູນ ແມ່ນເລີ້ມແຕ່ກາງເດືອນ ກຸມພາ 2019 ເປັນຕົ້ນໄປ, ລາຍລະອຽດໄດ້ລະບຸໄວ້ໃນເອກະສານແຈ້ງເຊີນເຂົ້າຮ່ວມການສົມທຽບລາຄາຂອງແຕ່ລະບ້ານ.
4. ໜັງສືສະເໜີລາຄາຈະຕ້ອງປະກອບໃຫ້ມີຄົບຖ້ວນ ບັນດາເອກະສານຕ່າງໆຕາມທີ່ໄດ້ກໍານົດໄວ້ໃນເອກະສານແຈ້ງເຊີນ, ຖ້າບໍ່ດັ່ງນັ້ນ ທີມງານຈັດຊື້ບ້ານ ຈະປະຕິເສດໜັງສືສະເໜີລາຄາຂອງທ່ານ ໂດຍຈະບໍ່ໄດ້ມີການຮັບຜິດຊອບໃດໆ;
5. ທ່ານສາມາດສອບຖາມຂໍ້ມູນເພີ່ມຕື່ມໄດ້ ທີ່ຫ້ອງການບ້ານທີ່ໄດ້ຮັບທຶນຈາກ ທລຍ ແລະ/ຫລື ຫ້ອງການ ທລຍ (ເວັບໄຊ: http://prflaos.org/procurement/announcements).

ດັ່ງນັ້ນ, ຈຶ່ງໄດ້ແຈ້ງເຊີນມາຍັງບັນດາບໍລິສັດທ້ອງຖິ່ນ ເພື່ອຊາບ.

ຜູ້ອໍານວຍການ ກອງທຶນຫລຸດຜ່ອນຄວາມທຸກຍາກ,

ຈິດ ທະວີໃສ